ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**
*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**
**ສັບບທີ ໔໐໗ ປພຖຊ/ ໐໔໐໔໐໗**

# ບົດຄວາມ

## ພັກຣັດປຣາໄຊທາງທະຫານ

ທ່ານ ບຸນຍັງ ວໍຣະຈິດ ຮອງປະທານປະເທດ ໄດ້ໄຂກອງປະຊຸມດ່ວນຂຶ້ນ ຢູ່ ວິທຍາຄານ ໂກ ສອນ ພົມວິຫານ(Source: TV. Lao Star USA. 1/8,9/08). ທ່ານ ໄດ້ຂໍໃຫ້ຜູ້ນຳ ກອງກຳລັງຕ່າງໆ ມີຄວາມສາມະຄີກັນ ຢູ່ໃນກອງທັບ. ທ່ານ ໄດ້ກ່າວໃນຕອນນຶ່ງວ່າ "*ເປັນກົລອຸບາຍ ຂອງອິດທິກຳລັງປໍຣະປັກ. ອັນນີ້, ແມ່ນສະພາບການ ຂອງໂລກ ຜັນແປໄປຕາມຍຸກສມັຍ*". ພ້ອມດຽວກັນນັ້ນ, ທ່ານໄດ້ສັ່ງໃຫ້ ພົລໂທ ດວງໃຈ ພິດຈິດ ລົງໄປກ້ຽວກ່ອມ ນາຍ ແລະພົນທະຫານ ຢູ່ຕາມກົມກອງຕ່າງໆອີກດ້ວຍ.

ຄວາມແຕກແຫງ ຂອງບັນດາຜູ້ກຳກອງກຳລັງຕ່າງໆ ແຂ່ງຂໍ່ໃສ່ກັນ ໃນກອງທັບຄັ້ງນີ້ສແດງໃຫ້ເຫັນເຖິງຄວາມປຣາໄຊ ທາງການທະຫານຂອງພັກຣັດວຽງຈັນ ຢ່າງຍັບເຍີນ. ຄວາມແຕກແຫງຂອງບັນດາຜູ້ນຳເຫລົ່າທັບຕ່າງໆ ບໍ່ໄດ້ເກີດມາຈາກກົລອຸບາຍ ຂອງອິດທິກຳລັງປໍຣະປັກແລະສະພາບການຂອງໂລກ ທີ່ຜັນແປໄປ ຕາມຍຸກສມັຍ ຄືດັ່ງທ່ານ ຮອງປະທານປະເທດເຂົ້າໃຈນັ້ນຈັກດີ້!.

ຕຣົງກັນຂ້າມ, ມັນເກີດມາຈາກ ຣະບົບການບໍຣິຫານປະເທດຊາດ ແບບຜເດັດການພັກດຽວ, ຫລ້າສມັຍ... ສວນທາງກັບຍຸກໂລກາວິວັດເປັນຕົ້ນເຫດ ເທົ້ານັ້ນເອງ!.

ກອງທັບ ທີ່ພັກປະຊາຊົນປະຕິວັດລາວ ເປັນຜູ້ກໍ່ຕັ້ງລ້ຽງດູ ແລະ ສຶກສາອົບຣົມ ເພື່ອໃຫ້ຮັກຣະບອບໃໝ່ "ສັງຄົມນິຍົມ" ແລະເຊື່ອໝັ້ນ ການນຳພາ ຂອງພັກຣັດ ຢ່າງຕາຍໃຈນັ້ນ, ດຽວນີ້, ນາຍ ແລະພົນທະຫານ ໄດ້ຂາດສັດທາ ຕໍ່ການນຳພາ ຂອງພັກຣັດໝົດແລ້ວ!. ຍ້ອນພັກຣັດ ຂາດຄຸນທັມ, ຂາດອະຣິຍະທັມ ໃນການບໍຣິຫານປະເທດຊາດ; ເຕັມໄປດ້ວຍ ກິເລດຕັນຫາ, ສໍ້ຣາດ

ບັງຫລວງ, ມີການສັດແຍ່ງຜົນປະໂຫຍດ ແລະແຕກແຍກກັນອອກເປັນ ຫລາຍກຸ່ມຫລາຍກ້ອນ. ພັກຣັດ ບໍ່ໄດ້ເອົາໃຈໃສ່ ຊ່ວຍເຫລືອເບິ່ງແຍງ ຊີວິດການເປັນຢູ່ ຂອງນາຍແລະ ພົນທະຫານ ຜູ້ອອກກິນເບັ້ຍບຳນານ, ນາຍແລະພົນທະຫານຜູ້ເສັຽອົງຄະ ຍ້ອນສູ້ຣົບໃນ ສມັຍສົງຄາມ. ພັກຣັດ ໄດ້ປ່ອຍປະລະຖິ້ມພວກເຂົາ ໄວ້ຕາມປາກຖ້ຳ, ຮ່ອມພູ ໃນເຂດຫົວພັນ ແລະເຂດອື່ນໆ ທົ່ວປະເທດ.

ກ່ອນການຍຶດອຳນາດວຽງຈັນ, ພັກ ໄດ້ໃຫ້ຄຳໝັ້ນສັນຍາກັບພວກເຂົາວ່າ "ເມື່ອໄດ້ເຂົ້າວຽງຈັນແລ້ວ... ກໍຈະໄດ້ເອົາພວກສະຫາຍ ໄປຢູ່ວຽງຈັນໂລດ! ຈະໃຫ້ມີ ຜູ້ເບິ່ງແຍງ ຮັບໃຊ້, ມີແພດໝໍປະຈຳຕົວ ເພື່ອຮັກສາ ສຸຂະພາບ. ສ່ວນລູກຫລານນັ້ນ, ກໍຈະຈັດໃຫ້ມີ ຣົດ ຮັບສົ່ງພວກເຂົາໄປໂຮງຮຽນທີ່ດີພິເສດ; ໃຫ້ສົມກັບພວກສະຫາຍ ໄດ້ເສັຽສລະ ເພື່ອປະເທດຊາດ".

-10 ປີຕໍ່ມາ, ພາຍຫລັງ ໄດ້ເຂົ້າວຽງຈັນ ເປັນທີ່ຮຽບຮ້ອຍແລ້ວ, ພວກເຂົາ ກໍໄດ້ທວງຖາມພັກຣັດວຽງຈັນວ່າ "ປານໃດ! ພວກຕົນ ຈະໄດ້ຍ້າຍເຂົ້າໄປຢູ່ວຽງຈັນ?" ພັກຣັດ ຊ້ຳພັກໃຫ້ຄຳຕອບວ່າ "ວຽງຈັນ ເປັນປ້ອມດ່ານໜ້າ, ເມື່ອສັດຕູ ບຸກໂຈມຕີເຂົ້າມາ...ພວກສະຫາຍ ກໍລ້ວນແຕ່ເປັນຜູ້ເສັຽອົງຄະສະສົນ, "ຈະຫລົບຫລີກ ກໍບໍ່ທັນ!". ສນັ້ນ, ພັກຣັດ ຮັກແພງພວກສະຫາຍ, ຈຶ່ງໃຫ້ພວກສະຫາຍຢູ່ໃກ້ໆປາກຖ້ຳນີ້ຫລະ! ຫລົບຫລີກ ກໍງ່າຍດາຍ!. ບັນດານັກຣົບ ເສັຽອົງຄະເຫລົ່ານັ້ນ "ບໍ່ມີທາງເລືອກ" ເໝັນ ກໍດົມ! ຂົມ ກໍກືນ...ເລີຍສເນີຕໍ່ພັກຣັດວ່າ "ຂໍໃຫ້ຊ່ວຍເຫລືອພາຫະນະອົງຄະທຽມ, ເພື່ອຈະໄດ້ຝຶກເຂບຕົນເອງ ຍ່າງໄປມາ ເລັກໆນ້ອຍ"ຊາມຊາຕາຍ".

ຜູ້ຕາງໜ້າ ຂອງພັກຣັດ, ກໍຈັດກອງປະຊຸມຂຶ້ນ ແລະແກ້ໄຂບັນຫາດັ່ງນີ້: ພວກສະຫາຍ ຜູ້ຂາກຸດເຂນຂາດ ແຕ່ຕາດີ...ໃຫ້ນັ່ງລໍ້ ເບິ່ງທາງ, ຜູ້ຕາບອດ ແຕ່ແຂນຂາດີ, ໃຫ້ເປັນແຮງຍູ້ລໍ້. ໃຫ້ພວກສະຫາຍ ແກ້ກັນຄືແນວນີ້! ສ່ວນລູກເມັຽນັ້ນ, ກໍໃຫ້ພາກັນກຸ້ມຕົນເອງ ເພິ່ງຕົນເອງໄປກ່ອນ.

ພັກຣັດ, ເມື່ອໄດ້ຂຶ້ນກຳອຳນາດແລ້ວ ຊ້ຳພັດຫັນໄປປະຕິບັດນະໂຍບາຍ"*ນາແລ້ວຂ້າຄວາຍເຖິກ, ເສິກແລ້ວ ຂ້າຄົນຫານ*". ພັກຣັດ, ນອກຈາກບໍ່ສົ່ງເສີມກອງທັບ ໃຫ້ມີຄວາມເຂັ້ມແຂງ ກ້າວໜ້າທັນສມັຍແລ້ວ, ກໍຍັງທັບມ້າງກອງທັບຂອງຕົນເອງ ໃຫ້ໝຸ່ນທະລາຍໄປອີກ!. ພັກຣັດ, ດຶງເອົາທະຫານໃນກອງທັບ ອອກໄປເປັນກອງກຳລັງສ່ວນບຸກຄົນ ແລະໃຫ້ປົກປ້ອງ ສິດຜົລປະໂຍດ ຂອງນາຍໃຜ ນາຍມັນ ຢ່າງເອົາເປັນເອົາຕາຍ!

ການທໍຣະຍົດ ຂອງພັກຣັດວຽງຈັນ ຕໍ່ນາຍ ແລະພົລທະຫານໃນກອງທັບຄັ້ງນີ້, ***ບໍ່ມີສູດ ຂອງຄວາມສາມະຄີອັນໃດ*** ທີ່ສາມາດຮຳບາດແຜຫົວໃຈ ໃຫ້ຫາຍເປັນປົກຕິໄດ້. ໃນຍາມສູ້ຣົບ, ກ່ອນການເຂົ້າມາມີອຳນາດ, ຜູ້ນຳການປະຕິວັດບອກສອນວ່າ ***ສຸຂ ກໍພ້ອມກັນສຸຂ, ທຸກ ກໍພ້ອມກັນທຸກ.***

ແຕ່ຕຣົງກັນຂ້າມ, ຄນະພັກຣັດ ມີເງິນຝາກຢູ່ຕ່າງປະເທດ, ຄົນລະ ຫລາຍຮ້ອຍລ້ານດອນລາສະຫະຣັດ. ສ່ວນທະຫານ, ຕລອດ 32 ປີຜ່ານມາແລ້ວນັ້ນ, 3 ເດືອນ ຈຶ່ງໄດ້ເບີກເງິນເທື່ອນຶ່ງ!.

ມັນບໍ່ຖືກຕ້ອງ ແລະບໍ່ມີຄວາມຍຸຕິທັມ ທີ່ພັກຣັດ ຕິວະຕິ້ມ ພວກນາຍ ແລະພົນທະຫານ, ນັກຣົບປົວຣະຊົນ ຜູ້ທີ່ຍອມເສັຽສລະຊີວິດ ແລະເລືອດເນື້ອ ເພື່ອປົກປ້ອງປະເທດຊາດ ຄືດັ່ງນີ້. ສນັ້ນ, ມັນເຖິງຄາວ ແລະຖືກຕ້ອງທີ່ສຸດແລ້ວ!... ທີ່ທ່ານ ນາຍແລະພົນທະຫານ ໄດ້ຕື່ນຕົວ ອອກມາຕໍ່ສູ່ ຮ່ວມກັນກັບພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ເພື່ອ ນຳພາຊາດ ໃຫ້ພົ້ນພັຍ, ເຮັດໃຫ້ ໄຊຊນະ ອັນຍິ່ງໃຫຍ່ ໃນປວັດສາດນີ້ ເປັນໄຊຊນະລວມ ແລະ ໝັ້ນຄົງຖາວອນ ຂອງ ປະຊາຊົນລາວທັງຊາດ.

ດຽວນີ້, ພັກຣັດ ໄດ້ຕົກເຂົ້າຢູ່ໃນທ່າຮັບຈົນຕາເຈຮອບດ້ານ, ຈະກາງຕໍ່ວຽດນາມ ຄືແຕ່ກ່ອນ ກໍບໍ່ໄດ້! ເພາະ ຊາວວຽດນາມ ທີ່ເຂົ້າມາຢູ່ໃນລາວ ກໍລ້ວນແລ້ວແຕ່ ເປັນ ອາສາສມັກ ມາແຕ່ ວຽດນາມໃຕ້. ພວກເຂົາ ມີແຕ່ຈະນຳພາປະຊາຊົນລາວ ອອກມາໂຮ່ຮ້ອງ ໃຫ້ພັກຣັດ ຕ້ອງປ່ຽນ ຣັຖບານໂດຍໄວ ເທົ່ານັ້ນເອງ. ພັກຣັດໄດ້ແລ່ນໄປຫາຈີນ, ພໍໄດ້ການຊ່ວຍເຫລືອ ເລັກໆນ້ອຍໆ *ໄດ້ເຄື່ອງນຸ່ງຫົ່ມ ໄດ້ຢາປົວພຍາດ... ແຕ່ບໍ່ໄດ້ອາວຸດສົງຄາມ*, ເພາະຈີນ ບໍ່ມີນະໂຍບາຍທຳສົງຄາມ ແລະກໍບໍ່ຕ້ອງການ ໃຫ້ມີ "**ສອງລາວ**". ຈີນເອງ, ກໍປະຕິບັດນະໂຍບາຍສັນຕິວິທີ ໃນການທ້ອນ ໂຮມປະເທດຈີນ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໔ ກຸມພາ ໔໐໐໗.**